ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ

ເລກທີ: 1953 /ກພຫ
ນະຄອນຫຼວງວຽງຈັນ, ວັນທີ: [illegible]4 AUG 2026

# ປະກາດຮັບສະໝັກພະນັກງານ ຈຳນວນ 1 ຕຳແໜ່ງ

ລັດຖະບານ ສປປ ລາວ ໄດ້ເຊັນສັນຍາເງິນກູ້ກັບທະນາຄານໂລກ ຈຳນວນ 37 ລ້ານໂດລາສະຫະລັດ) ເພື່ອສະໜັບສະໜູນໂຄງການຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນາການໃນເຂດຊົນນະບົດ ໄລຍະ II (ລພຊ II) ພາສາອັງກິດຂຽນວ່າ "Reducing Rural Poverty and Malnutrition Project II", ໄລຍະການຈັດຕັ້ງປະຕິບັດໂຄງການແຕ່ປີ 2024 – 2029, ຢູ່ 7 ແຂວງ 25 ເມືອງ (ຜົ້ງສາລີ, ອຸດົມໄຊ, ຫົວພັນ, ຊຽງຂວາງ, ສະຫວັນນະເຂດ, ສາລະວັນ ແລະ ເຊກອງ) ໂດຍຜ່ານການຈັດຕັ້ງປະຕິບັດໂຄງການໂດຍ ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ກົມຮ່ວມມື ແລະ ການເງິນສາກົນ ຂອງກະຊວງການເງິນ ທີ່ເຮັດວຽກ ແຜນງານໜຶ່ງດຽວທີ່ມີສ່ວນຮ່ວມຂອງຫຼາຍຂະແໜງການ, ແຂວງແມ່ນພະແນກກະສິກຳ ແລະ ສິ່ງແວດລ້ອມ ແລະ ພະແນກການເງິນ, ຂັ້ນເມືອງແມ່ນຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງກັບ ຫ້ອງການການເງິນເມືອງ. ໂຄງການ ລພຊ II ມີຫ້ອງການປະສານງານສະເພາະຢູ່ ຂັ້ນສູນກາງ, ແຂວງ, ເມືອງ ແລະ ມີ ຂໍ້ຕົກລົງແຕ່ງຕັ້ງຄະນະຊີ້ນຳ ແລະ ຄະນະມາຮັບຜິດຊອບບໍລິຫານໂຄງການຂັ້ນສູນກາງ ແມ່ນ ຕົກລົງຈາກລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຂັ້ນແຂວງ ແມ່ນໄດ້ຮັບການແຕ່ງຕັ້ງຈາກ ທ່ານເຈົ້າແຂວງ ແລະ ຂັ້ນເມືອງແມ່ນໄດ້ຮັບການແຕ່ງຕັ້ງຈາກເຈົ້າເມືອງ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຂອງໂຄງການແຕ່ລະຂັ້ນ.

ໂຄງການຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນາການໃນເຂດຊົນນະບົດ ໄລຍະ II ມີຄວາມຕ້ອງການຮັບສະໝັກພະນັກງານ ເຮັດວຽກເຕັມເວລາ ຈຳນວນ 1 ຕຳແໜ່ງ ປະຈຳຢູ່ຫ້ອງການປະສານງານໂຄງການ ລພຊ II ເມືອງງາ, ແຂວງອຸດົມໄຊ ລາຍລະອຽດມີດັ່ງລຸ່ມນີ້:

1. ພະນັກງານ ຊ່ວຍວຽກພັດທະນາຊຸມຊົນ ປະຈຳຢູ່ເມືອງງາ ແຂວງອຸດົມໄຊ 1 ຕຳແໜ່ງ.

ລາຍລະອຽດກອບໜ້າວຽກ ແລະ ເງື່ອນໄຂໃນການສະໝັກແຕ່ລະຕຳແໜ່ງ ສາມາດສະແກນຄິວອາໂຄດ ຫຼື ສົ່ງອີເມວສະເໜີຂໍ ແລະ ສາມາດຍື່ນເອກະສານສະໝັກດ້ວຍຕົນເອງ ຫຼື ສົ່ງຜ່ານທີ່ຢູ່ອີເມວດ້ານລຸ່ມ ໃນໂມງລັດຖະການ 08:00 ໂມງ – 17:00 ໂມງ ແລະ ປິດຮັບສະໝັກໃນວັນທີ 28 ສິງຫາ 2026.

**<u>ທີ່ຕັ້ງ ແລະ ເບີຕິດຕໍ່ພົວພັນຂອງ ໂຄງການ ລພຊ II</u>**

ທ່ານ ປອ ວິງສະຫວັນ ວົງໄກສອນ, ຮອງຫົວໜ້າກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ
ອີເມວ: rrpmp2023@gmail.com with Cc: phonesavanh.tms@gmail.com and insonesaysombath@yahoo.com
ໂຄງການຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດໂພຊະນາການໃນເຂດຊົນນະບົດ ໄລຍະ II (ລພຊ II)
ກົມພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຄຸ້ມຫ້ອງວ່າການສຳນັກງານນາຍົກ, ຖະໜົນສີດຳດວນ, ນະຄອນຫຼວງວຽງຈັນ, ເບີໂທລະສັບ: 020 29992063

ຫົວໜ້າກົມ

ປອ. ທັດສະກາ ສະພັງທອງ